ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 3061 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2025

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ

- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ) ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກົມກິລາລະດັບສູງ ສະບັບເລກທີ 302/ກສ, ລົງວັນທີ 16 ພຶດສະພາ 2025.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນ ແລະ ສະໂມສອນກິລາ ເພື່ອເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງແຕ່ລະຂັ້ນໃຫ້ມີຄວາມເປັນເອກະພາບ ແນໃສ່ຊຸກຍູ້ ສົ່ງເສີມ ສະຫະພັນ ແລະ ສະໂມສອນກິລາ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ**

ການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ແມ່ນການຕິດຕາມ, ກວດກາ, ການສ້າງຕັ້ງ, ການໂຈະ ຫຼື ການຍຸດເຊົາການເຄື່ອນໄຫວຂອງບັນດາສະຫະພັນ ແລະ ສະໂມສອນກິລາ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ຫຼັກການກ່ຽວກັບ ການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ**

1) ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາກິລາ-ກາຍຍະກຳ;
2) ປະຕິບັດຫຼັກການລວມສູນເປັນເອກະພາບ ໃນຂອບເຂດທົ່ວປະເທດ.



สแกนด้วย CamScanner

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວ ວຽກງານສະຫະພັນ ແລະ ສະໂມສອນກິລາ ໃນຂອບເຂດທົ່ວປະເທດ.

## ໝວດທີ 2

## ສະຫະພັນ ກິລາ

**ມາດຕາ 5 ການຈັດຕັ້ງສະຫະພັນກິລາ**

ການຈັດຕັ້ງສະຫະພັນກິລາ ແບ່ງອອກເປັນ 2 ປະເພດ ດັ່ງນີ້:

1. ສະຫະພັນກິລາແຫ່ງຊາດ;
2. ສະຫະພັນກິລາແຂວງ.

**ມາດຕາ 6 ສະຫະພັນກິລາແຫ່ງຊາດ**

ສະຫະພັນກິລາແຫ່ງຊາດ ແມ່ນການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ ຈັດຕັ້ງຂຶ້ນບົນພື້ນຖານ ການເຕົ້າໂຮມເອົາຕົວແທນຂອງສະຫະພັນກິລາແຂວງ, ນະຄອນຫຼວງ, ສະມາຄົມກິລາກະຊວງ, ສະໂມສອນກິລາແຂວງ ແລະ ໜ່ວຍກິລາເມືອງ, ເທດສະບານ, ນະຄອນ ໃນການສົ່ງເສີມຂະບວນການຫຼິ້ນ ກິລາ ແລະ ແຂ່ງຂັນກິລາປະເພດໜຶ່ງ ໃຫ້ມີຂະບວນການກວ້າງຂວາງເປັນເອກະພາບໃນຂອບເຂດ ທົ່ວປະເທດ, ສ້າງສາຍພົວພັນປະສານສົມທົບລະຫວ່າງສະໂມສອນກິລາຂອງບັນດາສະຫະພັນກິລາແຂວງ, ນະຄອນຫຼວງ ໂດຍປະສານງານກັບທຸກໆ ການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ ພາຍໃນປະເທດ ແລະ ການຈັດຕັ້ງກິລາສາກົນ.

**ມາດຕາ 7 ສິດ ແລະ ໜ້າທີ່ຂອງສະຫະພັນກິລາແຫ່ງຊາດ**

ສະຫະພັນກິລາແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຕົວແທນຂອງຊາດ ເພື່ອເຄື່ອນໄຫວວຽກງານກິລາ-ກາຍຍະກຳໃນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ;

2. ພັດທະນານັກກິລາ, ບຸກຄະລາກອນກິລາ, ໂຄງລ່າງພື້ນຖານ, ສະໜອງພາຫະນະ, ວັດຖຸປະກອນ ປະເພດກິລາທີ່ກ່ຽວຂ້ອງ;

3. ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳໃນລະດັບຊາດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ;

4. ຈັດການແຂ່ງຂັນກິລາ-ກາຍຍະກຳໃນລະດັບຊາດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ;

5. ປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ເພື່ອພັດທະນາກິລາ-ກາຍຍະກຳ ປະເພດ ຕ່າງໆ ໃຫ້ໄດ້ມາດຕະຖານສາກົນເທື່ອລະກ້າວ;

6. ສົມທົບກັບກະຊວງສຶກສາທິການ ແລະ ກິລາ ກຽມເຂົ້າຮ່ວມງານແຂ່ງຂັນກິລາ-ກາຍຍະກຳ ໃນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ຫຼື ການເປັນເຈົ້າພາບງານກິລາ-ກາຍຍະກຳ ລະດັບຕ່າງໆ;

7. ຮ່ວມມື, ຮັບການຊ່ວຍເຫຼືອຈາກສັງຄົມ, ສະຫະພັນກິລາອະນຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອ ພັດທະນາກິລາ-ກາຍຍະກຳຂອງຊາດ;

8. ສະໜັບສະໜູນ ແລະ ຊ່ວຍເຫຼືອ ສະຫະພັນກິລາ-ກາຍຍະກຳຂັ້ນແຂວງ;

9. ຖືກຄັດເລືອກເຂົ້າໃນຄະນະບໍລິຫານງານຂອງສະຫະພັນກິລາອະນຸພາກພື້ນ, ພາກພື້ນ ແລະ ສາກົນ;



สแกนด้วย CamScanner

10. ສະເໜີປະຕິບັດນະໂຍບາຍ ແລະ ລິງວັນ ຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ;

11. ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມກອງປະຊຸມວຽກງານກິລາ-ກາຍຍະກຳ;

12. ພົວພັນ, ຮ່ວມມືກັບສະຫະພັນກິລາອະນຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອພັດທະນາກິລາ-ກາຍຍະກຳຂອງຊາດ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກິລາ-ກາຍຍະກຳຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 8 ສະຫະພັນກິລາແຂວງ, ນະຄອນຫຼວງ**

ສະຫະພັນກິລາແຂວງ, ນະຄອນຫຼວງ ແມ່ນການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ ຈັດຕັ້ງຂຶ້ນບົນພື້ນຖານການເຕົ້າໂຮມເອົາຕົວແທນສະໂມສອນກິລາແຂວງ ແລະ ໜ່ວຍງານກິລາເມືອງ, ເທດສະບານ, ນະຄອນ ໃນການສົ່ງເສີມຂະບວນການຫຼິ້ນກິລາ ແລະ ແຂ່ງຂັນກິລາປະເພດໜຶ່ງ ໃຫ້ມີຂະບວນການຢ່າງກວ້າງຂວາງເປັນເອກະພາບໃນທົ່ວແຂວງ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງສະຫະພັນແຂວງ, ນະຄອນຫຼວງ**

ສະຫະພັນກິລາຂັ້ນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄັດເລືອກ, ຝຶກແອບ, ຝຶກຊ້ອມ, ທົດສອບນັກກິລາຂັ້ນແຂວງ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳ ທັງພາຍໃນ ແລະ ຕ່າງປະເທດ;

2. ຈັດການຝຶກອົບຮົມ ແລະ ພັດທະນານັກກິລາ ແລະ ບຸກຄະລາກອນກິລາ-ກາຍຍະກຳ ປະເພດກິລາທີ່ຕົນຮັບຜິດຊອບ;

3. ຈັດການແຂ່ງຂັນກິລາ ປະຈຳປີ ແລະ ຈັດກິດຈະກຳກິລາ-ກາຍຍະກຳຂັ້ນແຂວງ;

4. ປຸກລະດົມ, ຂົນຂວາຍ, ຊອກແຫຼ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກຳຂັ້ນແຂວງ;

5. ສະເໜີປະຕິບັດນະໂຍບາຍ ແລະ ລິງວັນຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ;

6. ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມປະຊຸມວຽກງານກິລາ-ກາຍຍະກຳ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານກິລາ-ກາຍຍະກຳ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 ເງື່ອນໄຂການສ້າງຕັ້ງສະຫະພັນກິລາແຫ່ງຊາດ**

ການສ້າງຕັ້ງສະຫະພັນກິລາແຫ່ງຊາດ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງລຸ່ມນີ້:

1. ມີຈຸດປະສົງ, ກຳນົດຂອບເຂດການເຄື່ອນໄຫວຢ່າງຈະແຈ້ງ, ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ;
2. ສະຫະພັນກິລາແຫ່ງຊາດທີ່ຈະຈັດຕັ້ງຂຶ້ນ ຕ້ອງມີກົດລະບຽບຂອງຕົນເອງທີ່ຖືກຮັບຮູ້ ແລະ ໄດ້ຮັບການຮັບຮອງຈາກສະຫະພັນກິລາພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງ;



สแกนด้วย CamScanner

3. ມີສະມາຊິກທີ່ເປັນສະຫະພັນ ຫຼື ສະໂມສອນກິລາແຂວງ, ນະຄອນຫຼວງ ຫຼື ສະມາຄົມກິລາກະຊວງ, ອົງການທຽບເທົ່າ ຢ່າງໜ້ອຍ 4 ພາກສ່ວນຂຶ້ນໄປ ໂດຍແມ່ນບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ຊຶ່ງຢ່າງໜ້ອຍໜຶ່ງໃນສະມາຊິກ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະຫະພັນກິລາແຫ່ງຊາດດັ່ງກ່າວ;
4. ຕ້ອງເປັນພົນລະເມືອງລາວ, ມີອາຍຸແຕ່ ສິບແປດປີຂຶ້ນໄປ ແລະ ມີປະຫວັດຈະແຈ້ງ;
5. ສະຫະພັນກິລາແຫ່ງຊາດຈັດຕັ້ງຂຶ້ນໃນລະດັບຊາດ ແລະ ອະນຸຍາດຈັດຕັ້ງສະຫະພັນກິລາອັນດຽວສໍາລັບກິລາ 1 ປະເພດ;
6. ມີຖານະການເງິນ, ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການເຄື່ອນໄຫວທີ່ໄດ້ມາດຕະຖານ;
7. ມີສໍານັກງານຕັ້ງຢູ່ ສປປ ລາວ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ, ມີໃບຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 11 ເງື່ອນໄຂການສ້າງຕັ້ງສະຫະພັນກິລາແຂວງ, ນະຄອນຫຼວງ**

ການສ້າງຕັ້ງສະຫະພັນກິລາແຂວງ, ນະຄອນຫຼວງ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງລຸ່ມນີ້:

1. ມີຈຸດປະສົງ, ກໍານົດຂອບເຂດການເຄື່ອນໄຫວຢ່າງຈະແຈ້ງ, ບໍ່ຂັດກັບລັດຖະທໍາມະນູນ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ;
2. ສະຫະພັນກິລາແຂວງ, ນະຄອນຫຼວງທີ່ຈະຈັດຕັ້ງຂຶ້ນ ຕ້ອງມີກົດລະບຽບຂອງຕົນເອງທີ່ຖືກຮັບຮູ້ ແລະ ໄດ້ຮັບການຮັບຮອງຈາກສະຫະພັນກິລາແຫ່ງຊາດທີ່ກ່ຽວຂ້ອງ;
3. ມີສະມາຊິກທີ່ເປັນໜ່ວຍກິລາ ຫຼື ສະໂມສອນກິລາເມືອງ, ເທດສະບານ, ນະຄອນ ຢ່າງໜ້ອຍ 4 ພາກສ່ວນຂຶ້ນໄປ ໂດຍແມ່ນບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ຊຶ່ງຢ່າງໜ້ອຍໜຶ່ງໃນສະມາຊິກ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະຫະພັນກິລາແຫ່ງຊາດດັ່ງກ່າວ;
4. ຕ້ອງເປັນພົນລະເມືອງລາວ, ມີອາຍຸແຕ່ ສິບແປດປີຂຶ້ນໄປ ແລະ ມີປະຫວັດຈະແຈ້ງ;
5. ສະຫະພັນກິລາແຂວງ, ນະຄອນຫຼວງຈັດຕັ້ງຂຶ້ນໃນລະດັບແຂວງ ແລະ ອະນຸຍາດຈັດຕັ້ງສະຫະພັນກິລາອັນດຽວສໍາລັບກິລາ 1 ປະເພດ;
6. ມີຖານະການເງິນ, ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການເຄື່ອນໄຫວທີ່ໄດ້ມາດຕະຖານ;
7. ມີສໍານັກງານຕັ້ງຢູ່ພາຍໃນແຂວງ, ນະຄອນຫຼວງ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ, ມີໃບຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 12 ການສ້າງຕັ້ງສະຫະພັນກິລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງດໍາເນີນການສ້າງຕັ້ງສະຫະພັນກິລາ ຕ້ອງຂໍຂຶ້ນທະບຽນສະຫະພັນກິລາກັບຂະແໜງສຶກສາທິການ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ.



สแกนด้วย CamScanner

**ມາດຕາ 13 ຂັ້ນຕອນການຂໍອະນຸມັດສ້າງຕັ້ງສະຫະພັນກິລາ**

ການຂໍອະນຸມັດສ້າງຕັ້ງສະຫະພັນກິລາ ປະກອບມີຂັ້ນຕອນດັ່ງນີ້:

1) ການສະເໜີຮັບຮອງການແຕ່ງຕັ້ງຄະນະຂັບເຄື່ອນສ້າງຕັ້ງສະຫະພັນກິລາ;

2) ການສະເໜີຂໍເປີດກອງປະຊຸມສ້າງຕັ້ງສະຫະພັນກິລາ

3) ການສະເໜີຂໍຮັບຮອງເອົາກົດລະບຽບສະຫະພັນກິລາ ແລະ ຄະນະບໍລິຫານງານສະຫະພັນກິລາ;

4) ການສະເໜີຂໍຈົດທະບຽນສະຫະພັນກິລາ.

ໃນການປະກອບເອກະສານ ເພື່ອສະເໜີຂໍອະນຸມັດຈົດທະບຽນສະຫະພັນກິລາແຫ່ງຊາດ, ສູນຝຶກສະຫະພັນກິລາແຫ່ງຊາດ, ສະຫະພັນກິລາແຂວງ, ນະຄອນຫຼວງ ລວມທັງສະໂມສອນກິລາອື່ນໆ ແມ່ນຈະຕ້ອງປະກອບເອກະສານຕ່າງໆດັ່ງລຸ່ມນີ້:

ກ) ການຍື່ນຂໍອະນຸມັດຂຶ້ນທະບຽນສະຫະພັນກິລາແຫ່ງຊາດ:

1. ໜັງສືສະເໜີຂໍອະນຸມັດຂຶ້ນທະບຽນສະຫະພັນກິລາແຫ່ງຊາດ;
2. ໜັງສືຮັບຮອງຄະນະບໍລິຫານງານສະຫະພັນກິລາແຫ່ງຊາດ;
3. ກົດລະບຽບຂອງສະຫະພັນກິລາແຫ່ງຊາດ;
4. ບົດວິພາກການສ້າງຕັ້ງສະຫະພັນກິລາແຫ່ງຊາດ.

ຂ) ການຍື່ນຂໍອະນຸມັດຂຶ້ນທະບຽນສະຫະພັນກິລາແຂວງ, ນະຄອນຫຼວງ:

1. ໜັງສືສະເໜີຂໍອະນຸມັດຂຶ້ນທະບຽນສະຫະພັນກິລາແຂວງ, ນະຄອນຫຼວງ;
2. ໜັງສືຮັບຮອງຄະນະບໍລິຫານງານສະຫະພັນກິລາແຂວງ, ນະຄອນຫຼວງ;
3. ກົດລະບຽບຂອງສະຫະພັນກິລາແຂວງ, ນະຄອນຫຼວງ;
4. ບົດວິພາກການສ້າງຕັ້ງສະຫະພັນກິລາແຂວງ, ນະຄອນຫຼວງ.

## ໝວດທີ 3
## ສະໂມສອນກິລາ

**ມາດຕາ 14 ການຈັດຕັ້ງສະໂມສອນກິລາ**

ການຈັດຕັ້ງສະໂມສອນກິລາ ແບ່ງອອກເປັນ 2 ປະເພດ ດັ່ງນີ້:

1. ສະໂມສອນກິລາສະໝັກຫຼິ້ນ;
2. ສະໂມສອນກິລາອາຊີບ.

**ມາດຕາ 15 ສະໂມສອນກິລາສະໝັກຫຼິ້ນ**

ສະໂມສອນກິລາສະໝັກຫຼິ້ນ ແມ່ນການຈັດຕັ້ງ ຫຼື ບຸກຄົນເປັນຜູ້ສ້າງຕັ້ງຂຶ້ນ ໂດຍໄດ້ຖືກຮັບຮອງ ຈາກສະຫະພັນກິລາ ຫຼື ສະມາຄົມກິລາ-ກາຍຍະກຳທີ່ກ່ຽວຂ້ອງ ແລະ ອີງການຄຸ້ມຄອງວຽກງານ ກິລາ-ກາຍຍະກຳຂັ້ນນັ້ນ.



สแกนด้วย CamScanner

**ມາດຕາ 16 ສະໂມສອນກິລາອາຊີບ**

ສະໂມສອນກິລາອາຊີບ ແມ່ນການຈັດຕັ້ງ ຫຼື ບຸກຄົນເປັນຜູ້ສ້າງຂຶ້ນ ໂດຍໄດ້ຖືກຮັບຮອງຈາກ ສະຫະພັນກິລາ ຫຼື ສະມາຄົມກິລາ-ກາຍຍະກຳທີ່ກ່ຽວຂ້ອງ, ອົງການຄຸ້ມຄອງກິລາ-ກາຍຍະກຳຂັ້ນນັ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອກໍ່ສ້າງ, ຝຶກແອບ, ຝຶກຊ້ອມນັກກິລາ ແລະ ແຂ່ງຂັນເປັນອາຊີບ.

**ມາດຕາ 17 ເງື່ອນໄຂການສ້າງຕັ້ງສະໂມສອນກິລາ**

ການສ້າງຕັ້ງສະໂມສອນກິລາ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງລຸ່ມນີ້:

1. ມີຈຸດປະສົງ, ກຳນົດຂອບເຂດການເຄື່ອນໄຫວຢ່າງຈະແຈ້ງ, ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ;
2. ສະໂມສອນກິລາທີ່ຈະຈັດຕັ້ງຂຶ້ນ ຕ້ອງມີກົດລະບຽບຂອງຕົນເອງທີ່ຖືກຮັບຮູ້ ແລະ ໄດ້ຮັບການຮັບຮອງຈາກສະຫະພັນກິລາແຫ່ງຊາດທີ່ກ່ຽວຂ້ອງ;
3. ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງສະໂມສອນກິລາ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະໂມສອນກິລາດັ່ງກ່າວ;
4. ຕ້ອງເປັນພົນລະເມືອງລາວ, ມີອາຍຸແຕ່ ສິບແປດປີຂຶ້ນໄປ ແລະ ມີປະຫວັດຈະແຈ້ງ;
5. ມີຖານະການເງິນ, ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການເຄື່ອນໄຫວທີ່ໄດ້ມາດຕະຖານ;
6. ມີສຳນັກງານຕັ້ງຢູ່ພາຍໃນແຂວງ, ນະຄອນຫຼວງ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ, ມີໃບຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ;
7. ສະເພາະເງື່ອນໄຂການສ້າງຕັ້ງສະໂມສອນກິລາອາຊີບ ແມ່ນປະຕິບັດຕາມມາດຕາ 84 (ຂໍ້ 2 ວັກ 3) ແລະ ມາດຕາ 88 ຂອງກົດໝາຍວ່າດ້ວຍກິລາ-ກາຍຍະກຳ ສະບັບປັບປຸງ 2019.

**ມາດຕາ 18 ຂັ້ນຕອນອະນຸມັດສ້າງຕັ້ງສະໂມສອນກິລາ**

ການຂໍອະນຸມັດສ້າງຕັ້ງສະໂມສອນກິລາ ປະກອບມີຂັ້ນຕອນດັ່ງນີ້:

1) ການສະເໜີຮັບຮອງການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະໂມສອນກິລາ;

2) ການສະເໜີຂໍເປີດກອງປະຊຸມສ້າງຕັ້ງສະໂມສອນກິລາ

3) ການສະເໜີຂໍຮັບຮອງເອົາກົດລະບຽບສະໂມສອນກິລາ ແລະ ຄະນະບໍລິຫານງານສະໂມສອນກິລາ;

4) ການສະເໜີຂໍຈົດທະບຽນສະໂມສອນກິລາ.

ໃນການປະກອບເອກະສານ ເພື່ອສະເໜີຂໍອະນຸມັດຈົດທະບຽນສະໂມສອນກິລາ ແມ່ນຈະຕ້ອງປະກອບເອກະສານຕ່າງໆ ດັ່ງລຸ່ມນີ້:

1. ໜັງສືສະເໜີຂໍອະນຸມັດຂຶ້ນທະບຽນສະໂມສອນກິລາ;
2. ໜັງສືຮັບຮອງຄະນະບໍລິຫານງານສະໂມສອນກິລາ;
3. ກົດລະບຽບຂອງສະໂມສອນກິລາ;
4. ບົດວິພາກການສ້າງຕັ້ງສະໂມສອນກິລາ;
5. ໜັງສືຢັ້ງຢືນ ຫຼື ຮັບຮອງຈາກການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນບ້ານ, ຂັ້ນເມືອງ (ທີ່ຈຳເປັນ).



สแกนด้วย CamScanner

6. ສະເພາະການຂໍຈົດທະບຽນສະໂມສອນກິລາອາຊີບ ແມ່ນປະຕິບັດຕາມມາດຕາ 84 (ຂໍ້ 2 ວັກ 3) ແລະ ມາດຕາ 88 ຂອງກົດໝາຍວ່າດ້ວຍກິລາ-ກາຍຍະກໍາ ສະບັບປັບປຸງ 2019.

## ໝວດທີ 4

## ອົງການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ

**ມາດຕາ 19 ອົງການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ**

ອົງການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ປະກອບມີ:

1) ກະຊວງສຶກສາທິການ ແລະ ກິລາ;
2) ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
3) ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ, ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນງານ ແລະ ໂຄງການພັດທະນາກິລາ-ກາຍຍະກໍາ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ມະຕິ, ຄໍາສັ່ງ ຂອງລັດຖະບານກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ແລະ ຊີ້ນໍາການຈັດຕັ້ງປະຕິບັດ;

4. ປັບປຸງ, ບູລະນະກົງຈັກການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ແຕ່ສູນກາງລົງຮອດທ້ອງຖິ່ນ. ຄຸ້ມຄອງ, ກໍ່ສ້າງຖັນແຖວພະນັກງານ-ລັດຖະກອນ, ບຸກຄະລາກອນ ແລະ ນັກກິລາ-ກາຍຍະກໍາ ປະເພດຕ່າງໆ ລວມທັງນັກກິລາ-ກາຍຍະກໍາຄົນພິການ ຕາມກົດໝາຍ ແລະ ລະບຽບການ;

5. ແຕ່ງຕັ້ງ, ປັບປຸງ, ສັບຊ້ອນ, ເລື່ອນຊັ້ນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນຕໍ່ພະນັກງານ-ລັດຖະກອນ, ບຸກຄະລາກອນ ແລະ ນັກກິລາ-ກາຍຍະກໍາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ສ້າງສູນຝຶກກິລາ, ສະໂມສອນ ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກໍາລະດັບຊາດ;

7. ອະນຸຍາດຈັດຕັ້ງການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກໍາ ປະເພດຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມຮັບຜິດຊອບຂອງຕົນ;

8. ຄົ້ນຄວ້າສະເໜີລັດຖະບານ ເພື່ອຂໍອະນຸຍາດຈັດການແຂ່ງຂັນ ແລະ ເຂົ້າຮ່ວມງານມະຫາກໍາກິລາແຫ່ງຊາດ, ກິລາຄົນພິການທົ່ວປະເທດ, ກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ກິລາມະຫາວິທະຍາໄລລາວ, ກິລາຊີເກມ, ກິລາເອຊຽນເກມ ແລະ ກິລາໂອລິມປິກເກມ;

9. ກໍ່ສ້າງ, ຄຸ້ມຄອງ, ນໍາໃຊ້ໂຄງລ່າງພື້ນຖານ, ສະຖານທີ່ຝຶກແອບ, ຝຶກຊ້ອມການແຂ່ງຂັນ, ພາຫະນະ, ວັດຖຸປະກອນກິລາ-ກາຍຍະກໍາ, ງົບປະມານຂອງຕົນໃຫ້ມີປະສິດທິຜົນ;

10. ສ້າງຕັ້ງໜ່ວຍງານຮັບຜິດຊອບຄຸ້ມຄອງສະໜາມກິລາ-ກາຍຍະກໍາລະດັບຊາດ;



สแกนด้วย CamScanner

11. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເພື່ອພັດທະນາກິລາ-ກາຍຍະກຳ;

12. ຄົ້ນຄວ້າ, ວິໄຈ ວິທະຍາສາດ, ເຕັກນິກ, ຍຸດທະວິທີ, ການແພດ, ເກັບກຳຂໍ້ມູນຂ່າວສານກ່ຽວກັບ ກິລາ-ກາຍຍະກຳ ແລະ ແນະນຳ, ເຜີຍແຜ່ໃຫ້ແກ່ສັງຄົມ ເປັນຕົ້ນ ຢູ່ສະຖານການສຶກສາ ແລະ ສະຖາບັນກິລາ-ກາຍຍະກຳ;

13. ຊີ້ນຳ, ແນະນຳ, ເຜີຍແຜ່ດ້ານວິຊາການໃຫ້ແກ່ຂະແໜງການກິລາ-ກາຍຍະກຳ ໃນທົ່ວປະເທດ;

14. ອະນຸຍາດການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະຫະພັນກິລາແຫ່ງຊາດ;

15. ຮັບຮູ້ການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະໂມສອນ, ສະຫະພັນກິລາຂັ້ນແຂວງ;

16. ສະເໜີລັດຖະບານ ເພື່ອຮັບຮອງການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ຄະນະກຳມະການໂອລິມປິກແຫ່ງຊາດລາວ, ຄະນະກຳມະການພາຣາລິມປິກແຫ່ງຊາດລາວ;

17. ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ;

18. ເຊັນສັນຍາ, ອະນຸສັນຍາກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ເພື່ອການຊ່ວຍເຫຼືອ, ການຮ່ວມມືກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ບົນພື້ນຖານການເຫັນດີຂອງລັດຖະບານ;

19. ພົວພັນຮ່ວມມື ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ກັບບັນດາປະເທດໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນ;

20. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ໃຫ້ລັດຖະບານຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ;

2. ຄົ້ນຄ້ວາ, ວາງແຜນການ, ໂຄງການພັດທະນາກິລາ-ກາຍຍະກຳ ພາຍໃນແຂວງ, ນະຄອນຫຼວງ ເພື່ອສະເໜີຂັ້ນເທິງຂອງຕົນອະນຸຍາດ ແລ້ວຈັດຕັ້ງປະຕິບັດ;

3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະມາຄົມກິລາ-ກາຍຍະກຳ ເພື່ອໃຫ້ຂັ້ນເທິງພິຈາລະນາ;

4. ອະນຸຍາດສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ສະຫະພັນກິລາ, ສະໂມສອນກິລາ-ກາຍຍະກຳ ພາຍໃນແຂວງ, ນະຄອນຫຼວງ;

5. ສະເໜີແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນ ຕໍ່ພະນັກງານ-ລັດຖະກອນ, ບຸກຄະລາກອນ ແລະ ນັກກິລາ-ກາຍຍະກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ສະເໜີຕໍ່ຂັ້ນເທິງພິຈາລະນາ;

6. ຊີ້ນຳ, ແນະນຳ, ເຜີຍແຜ່ ວິຊາການກິລາ-ກາຍຍະກຳ ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ, ຮາກຖານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;



สแกนด้วย CamScanner

7. ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກແອບ, ຝຶກຊ້ອມ, ທົດສອບ, ສ້າງ, ບຳລຸງດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນລະດັບຕ່າງໆ;

8. ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ໃນທ້ອງຖິ່ນຂອງຕົນ;

9. ຄຸ້ມຄອງ, ພັດທະນາ, ນຳໃຊ້ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸອຸປະກອນ, ງົບປະມານຂອງກິລາ-ກາຍຍະກຳໃຫ້ມີປະສິດທິຜົນ;

10. ສະເໜີສ້າງຕັ້ງໜ່ວຍງານຮັບຜິດຊອບຄຸ້ມຄອງສະໜາມກິລາ-ກາຍຍະກຳ;

11. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອພັດທະນາກິລາ-ກາຍຍະກຳ ໃນທ້ອງຖິ່ນຂອງຕົນ;

12. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງສະໂມສອນກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ສະໂມສອນກິລາ;

2. ຄົ້ນຄວ້າ, ວາງແຜນການ, ໂຄງການພັດທະນາກິລາ-ກາຍຍະກຳ ເພື່ອສະເໜີຕໍ່ຂັ້ນເທິງຂອງຕົນອະນຸມັດ ແລ້ວຈັດຕັ້ງປະຕິບັດ;

3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກສະໂມສອນກິລາ-ກາຍຍະກຳ ເພື່ອໃຫ້ຂັ້ນເທິງພິຈາລະນາ;

4. ຮັບຮູ້ການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ໜ່ວຍກິລາ-ກາຍຍະກຳຮາກຖານ;

5. ສະເໜີແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນ ຕໍ່ພະນັກງານ-ລັດຖະກອນ, ບຸກຄະລາກອນກິລາ-ກາຍຍະກຳ ຕໍ່ຂັ້ນເທິງ ເພື່ອພິຈາລະນາ;

6. ຊີ້ນຳ, ແນະນຳ, ເຜີຍແຜ່ ວິຊາການກິລາ-ກາຍຍະກຳ ໃຫ້ແກ່ສະໂມສອນ, ໜ່ວຍກິລາ-ກາຍຍະກຳຮາກຖານ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກແອບ, ຝຶກຊ້ອມ, ທົດສອບ, ສ້າງ, ບຳລຸງດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາລະດັບຕ່າງໆ;

8. ຮຽກໂຮມ ແລະ ເຂົ້າຮ່ວມປະຊຸມ ກ່ຽວກັບວຽກງານຄຸ້ມຄອງສະໂມສອນກິລາ ໃນທ້ອງຖິ່ນຂອງຕົນ;

9. ຄຸ້ມຄອງ, ພັດທະນາ, ນຳໃຊ້ໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ, ງົບປະມານກິລາ-ກາຍຍະກຳໃຫ້ມີປະສິດທິຜົນ;



สแกนด้วย CamScanner

10. ລະດົມການສະໜັບສະໜູນທຶນຮອນຈາກສັງຄົມ ເພື່ອພັດທະນາກິລາ-ກາຍຍະກໍາ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຄຸ້ມຄອງສະໂມສອນກິລາ ໃຫ້ພະແນກສຶກສາທິການ ແລະ ກິລາ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານຂອງສະຫະພັນ ແລະ ສະໂມສອນກິລາ ບັນດາກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບ ແລະ ຮ່ວມມືກັບຂະແໜງການສຶກສາທິການ ແລະ ກິລາ ກ່ຽວກັບວຽກງານສະຫະພັນ ແລະ ສະໂມສອນກິລາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 24 ການກວດກາວຽກງານຂອງສະຫະພັນ ແລະ ສະໂມສອນກິລາ**

ການກວດກາວຽກງານຂອງສະຫະພັນ ແລະ ສະໂມສອນກິລາ ແມ່ນການກວດກາການເຄື່ອນໄຫວ ແລະ ການຄຸ້ມຄອງບໍລິຫານຂອງສະຫະພັນ ແລະ ສະໂມສອນກິລາ ຊຶ່ງມີສອງປະເພດ ດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາວຽກງານຂອງສະຫະພັນ ແລະ ສະໂມສອນກິລາ ທີ່ດໍາເນີນປົກກະຕິ ໂດຍມີການກໍານົດເວລາທີ່ແນ່ນອນ;

2. ການກວດກາສະເພາະກິດ ແມ່ນການກວດກາຂອງລັດຖະບານຕໍ່ການເຄື່ອນໄຫວວຽກງານຂອງສະຫະພັນ ແລະ ສະໂມສອນກິລາ ໃນກໍລະນີມີຄວາມຈໍາເປັນ.

**ມາດຕາ 25 ການໂຈະ, ການຖອນ ຫຼື ຢຸດເຊົາ ຂອງສະຫະພັນ ແລະ ສະໂມສອນກິລາ**

ອົງການຄຸ້ມຄອງວຽກງານຂອງສະຫະພັນ ແລະ ສະໂມສອນກິລາ ສາມາດໂຈະການເຄື່ອນໄຫວ ຫຼື ຖອນໃບອະນຸຍາດດໍາເນີນການຈັດຕັ້ງ ແລະ ເຄື່ອນໄຫວກ່ຽວກັບວຽກງານກິລາ-ກາຍຍະກໍາ ຂອງສະຫະພັນ ແລະ ສະໂມສອນກິລາດັ່ງກ່າວ, ຖ້າເຫັນວ່າ ບໍ່ເຄື່ອນໄຫວວຽກງານກິລາ-ກາຍຍະກໍາໄປຕາມຈຸດປະສົງ, ເນື້ອໃນ, ຮູບແບບ, ປະເພດກິລາ ທີ່ໄດ້ຮັບອະນຸຍາດ.

ໃນກໍລະນີທີ່ວິສາຫະກິດ ຫຼື ສະໂມສອນ ມີຈຸດປະສົງຢຸດເຊົາການເຄື່ອນໄຫວທຸລະກິດກ່ຽວກັບກິລາ-ກາຍຍະກໍາ ຕ້ອງແຈ້ງເປັນລາຍລັກອັກສອນຢ່າງຊ້າ ສາມສິບວັນ ຕໍ່ຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການທີ່ກ່ຽວຂ້ອງຕາມລໍາດັບຂັ້ນຮັບຜິດຊອບ.



สแกนด้วย CamScanner

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມກິລາລະດັບສູງ ສົມທົບກັບ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ, ສະຫະພັນກິລາ, ສະໂມສອນກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໃຊ້ປ່ຽນແທນ ຂໍ້ກຳນົດວ່າດ້ວຍການຈັດຕັ້ງຄຸ້ມຄອງສະຫະພັນ ແລະ ສະໂມສອນ ສະບັບເລກທີ 868/ສສກ, ລົງວັນທີ 06 ມິຖຸນາ 2013.

ລັດຖະມົນຕີ

ຮສ. ປອ. ພຸດ ສິມມາລາວົງ



สแกนด้วย CamScanner